# ຕ້ອງການຄວາມຊ່ວຍເຫຼືອໃນການ ຊຳລະຄ່າສາທາລະນູປະໂພກຂອງທ່ານບໍ?

**ທ່ານກຳລັງຄ້າງຊຳລະ ຫຼື ກຳລັງປະສົບບັນຫາໃນການຊຳລະເງິນໃຫ້ກັບ Seattle City Light (ຄ່າໄຟຟ້າ) ຫຼື Seattle Public Utilities (ຄ່ານ້ຳ, ຄ່າບຳບັດນ້ຳເສຍ, ຄ່າກຳຈັດຂີ້ເຫຍື້ອ) ຂອງທ່ານບໍ?**

ພວກເຮົາຢູ່ທີ່ນີ້ເພື່ອໃຫ້ຄວາມຊ່ວຍເຫຼືອ! ພວກເຮົາສະເໜີຕົວເລືອກໃນການຊຳລະຄືນ ແລະ ໂຄງການຊ່ວຍເຫຼືອການຊຳລະຄ່າໃຊ້ຈ່າຍເພື່ອຊ່ວຍເຫຼືອໃຫ້ລູກຄ້າຂອງພວກເຮົາໃນການຊຳລະຄ່າສາທາລະນູປະໂພກໄດ້ທັນເວລາ.

## ແຜນການຊຳລະເງິນ

### ແຜນການຊຳລະເງິນໃຫ້ກັບ Seattle City Light ແລະ Seattle Public Utilities

ຖ້າທ່ານຄ້າງຊຳລະເງິນໃຫ້ກັບ Seattle City Light (ຄ່າໄຟຟ້າ) ຫຼື Seattle Public Utilities (ຄ່ານ້ຳ, ຄ່າບຳບັດນ້ຳເສຍ, ຄ່າກຳຈັດຂີ້ເຫຍື້ອ) ພວກເຮົາສະເໜີແຜນການຊຳລະເງິນໃຫ້ແກ່ຜູ້ຢູ່ອາໄສ ແລະ ລູກຄ້າປະເພດທຸລະກິດທຸກທ່ານ. ດ້ວຍແຜນການຊຳລະເງິນນີ້ ທ່ານສາມາດຈ່າຍຍອດຄົງເຫຼືອຂອງທ່ານໂດຍຈ່າຍເປັນງວດດ້ວຍຈຳນວນເງິນທີ່ໜ້ອຍລົງເມື່ອເວລາຜ່ານໄປ.

## ໂຄງການຊ່ວຍເຫຼືອດ້ານການຊຳລະຄ່າໃຊ້ຈ່າຍ

ຖ້າທ່ານເປັນລູກຄ້າທີ່ເປັນຜູ້ຢູ່ອາໄສ ແລະ ມີຄຸນສົມບັດຕາມຂໍ້ກຳນົດໃນການມີສິດໄດ້ຮັບຄວາມຊ່ວຍເຫຼືອດ້ານລາຍໄດ້ ທ່ານອາດຈະມີສິດໃນການໄດ້ຮັບຄວາມຊ່ວຍດ້ານການຊຳລະຄ່າໃຊ້ຈ່າຍຢ່າງຕໍ່ເນື່ອງ ແລະ ສຸກເສີນ.

## ໂຄງການສ່ວນຫຼຸດຄ່າສາທາລະນຸປະໂພກ

ລູກຄ້າທີ່ເຂົ້າເກນດ້ານລາຍໄດ້ສາມາດເຂົ້າຮ່ວມໃນໂຄງການສ່ວນຫຼຸດຄ່າສາທາລະນູປະໂພກຂອງເມືອງຊີແອຕເທິລ ເຊິ່ງໄດ້ສະເໜີສ່ວນຫຼຸດ 60% ສຳລັບໃບຮຽກເກັບເງິນຄ່າໄຟຂອງ Seattle City Light ໃນອະນາຄົດ ແລະ 50% ສຳລັບໃບຮຽກເກັບເງິນຄ່າສາທານູປະໂພກຂອງ Seattle Public Utilities ໃນອະນາຄົດ.

## ໂຄງການຊ່ວຍເຫຼືອດ້ານການຊຳລະຄ່າໃຊ້ຈ່າຍສຸກເສີນ

### Seattle City Light

ຖ້າທ່ານກຳລັງຄ້າງຈ່າຍບິນຄ່າໄຟຟ້າຂອງທ່ານ ແລະ ມີຄວາມສ່ຽງຕໍ່ການຖືກຕັດໄຟ ໂຄງການຄວາມຊ່ວຍເຫຼືອດ້ານການຊຳລະຄ່າໃຊ້ຈ່າຍສຸກເສີນຂອງ Seattle City Light ອາດຈະສາມາດຊ່ວຍທ່ານໄດ້. ລູກຄ້າທີ່ເຂົ້າເກນດ້ານລາຍໄດ້ຈະໄດ້ຮັບຄວາມຊ່ວຍເຫຼືອສູງເຖິງ 710 ໂດລາຕໍ່ປີປະຕິທິນໃນການຊ່ວຍເຫຼືອສຸກເສີນເພື່ອຫຼຸດຜ່ອນຍອດຄົງເຫຼືອທີ່ຜ່ານມາຂອງເຂົາເຈົ້າ. ຄອບຄົວທີ່ມີເດັກນ້ອຍອາຍຸຕ່ຳກວ່າ 18 ປີອາດຈະມີສິດໄດ້ຮັບຄວາມຊ່ວຍເຫຼືອສູງເຖິງ 1,420 ໂດລາຕໍ່ປີປະຕິທິນ.

### Seattle Public Utilities

ຖ້າທ່ານກຳລັງຄ້າງຈ່າຍບິນຄ່ານ້ຳ/ຄ່າບຳບັດນ້ຳເສຍ/ຄ່າກຳຈັດຂີ້ເຫຍື້ອຂອງທ່ານ ແລະ ມີຄວາມສ່ຽງຕໍ່ການຖືກປິດໃຊ້ບໍລິການ ໂຄງການຊ່ວຍເຫຼືອດ້ານການຊຳລະຄ່າໃຊ້ຈ່າຍສຸກເສີນຂອງ Seattle Public Utilities ອາດຈະສາມາດຊ່ວຍທ່ານໄດ້. ລູກຄ້າທີ່ເຂົ້າເກນດ້ານລາຍໄດ້ຈະໄດ້ຮັບຄວາມຊ່ວຍເຫຼືອສູງເຖິງ 518 ໂດລາຕໍ່ປີໃນການຊ່ວຍເຫຼືອສຸກເສີນເພື່ອຫຼຸດຜ່ອນຍອດຄົງເຫຼືອທີ່ຜ່ານມາຂອງເຂົາເຈົ້າ. ຄອບຄົວທີ່ມີເດັກນ້ອຍອາຍຸຕ່ຳກວ່າ 18 ປີອາດຈະມີສິດໄດ້ຮັບຄວາມຊ່ວຍເຫຼືອສູງເຖິງ 1,036 ໂດລາຕໍ່ປີປະຕິທິນ.

## ຕິດຕໍ່ເຊື່ອມໂຍງກັບພວກເຮົາ

ຖ້າທ່ານຄ້າງຈ່າຍຄ່າສາທາລະນູປະໂພກ ຫຼື ປະສົບບັນຫາໃນການຈ່າຍເງິນໃນແຕ່ລະເດືອນ ພວກເຮົາສາມາດຮ່ວມມືກັບທ່ານເພື່ອຈັດທຳແຜນການຈ່າຍເງິນ ແລະ ສະໝັກຂໍຄວາມຊ່ວຍເຫຼືອກ່ຽວກັບການຈ່າຍຄ່າໃຊ້ຈ່າຍເພື່ອໃຫ້ທ່ານສາມາດໄດ້ຮັບບໍລິການສາທາລະນູປະໂພກຂອງທ່ານຕໍ່ໄປໄດ້.

### ເຂົ້າເບິ່ງພວກເຮົາທາງອອນລາຍ

ເຂົ້າໄປເບິ່ງທີ່ seattle.gov/UtilityBillHelp ເພື່ອຈັດທຳແຜນການຈ່າຍເງິນ, ລົງທະບຽນເພື່ອຂໍຄວາມຊ່ວຍເຫຼືອກ່ຽວກັບຄ່າໃຊ້ຈ່າຍຕ່າງໆ ແລະ ຈ່າຍຍອດເງິນຄົງເຫຼືອຂອງທ່ານໃຫ້ຫຼຸດລົງ.

### ໂທຫາທີມງານບໍລິການລູກຄ້າຂອງພວກເຮົາ

ໂທຫາພວກເຮົາທີ່ເບີ (206) 684-3000 (ວັນຈັນ - ວັນສຸກ ເວລາ 7:30 ໂມງເຊົ້າ - 06:00 ໂມງແລງ) ເພື່ອຊຳລະເງິນ, ລົມກັບຜູ້ຕາງໜ້າກ່ຽວກັບການຈັດທຳແຜນການຈ່າຍເງິນ ຫຼື ສະໝັກເຂົ້າຮ່ວມໂຄງການຊ່ວຍເຫຼືອດ້ານການຈ່າຍຄ່າໃຊ້ຈ່າຍ. ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອເປັນພາສາອື່ນທີ່ບໍ່ແມ່ນພາສາອັງກິດ ທີມງານບໍລິການລູກຄ້າຂອງພວກເຮົາຈະຊ່ວຍເຫຼືອທ່ານໂດຍບໍ່ມີຄ່າໃຊ້ຈ່າຍເປັນພາສາທີ່ທ່ານຕ້ອງການ.

### ໄປທີ່ສູນບໍລິການລູກຄ້າຂອງພວກເຮົາ

ໄປທີ່ສູນບໍລິການລູກຄ້າເພື່ອຊຳລະໃບບິນຂອງທ່ານດ້ວຍຕົນເອງດ້ວຍເງິນສົດ, ເຊັກ ຫຼື ບັດເຄຣດິດ.

**Seattle City Light North Service Center**
1300 N 97th Street, Seattle, WA 98103 | ວັນຈັນ-ວັນສຸກ ເວລາ 8:30 ໂມງເຊົ້າ - 4:30 ໂມງແລງ | (206) 615-0600

**Seattle City Light South Service Center**
3613 4th Avenue S, Seattle, WA 98134 | ວັນຈັນ-ວັນສຸກ ເວລາ 8:30 ໂມງເຊົ້າ - 4:30 ໂມງແລງ | (206) 386-4200

**Ballard Service Center**
5604 22nd Ave NW, Seattle, WA 98107 | ວັນອັງຄານ-ວັນສຸກ ເວລາ 9 ໂມງເຊົ້າ-5 ໂມງແລງ | (206) 684-4060

**Central District Service Center**
464 12th Avenue, First Fl, Seattle, WA 98122 | ວັນອັງຄານ-ວັນສຸກ ເວລາ 9 ໂມງເຊົ້າ-5 ໂມງແລງ | (206) 684-4767

**Downtown Service Center**
700 Fifth Avenue, Seattle, WA 98104 | ວັນຈັນ-ວັນສຸກ ເວລາ 8:30 ໂມງເຊົ້າ-4 ໂມງແລງ | (206) 684-3000

**Lake City Service Center**
12525 28th Ave NE, 2nd Fl, Seattle, WA 98125 | ວັນອັງຄານ-ວັນເສົາ ເວລາ 9 ໂມງເຊົ້າ-5 ໂມງແລງ | (206) 684-7526

**Southeast Service Center**
3815 S Othello St, Suite 105, Seattle, WA 98118 | ວັນຈັນ-ວັນເສົາ ເວລາ 9 ໂມງເຊົ້າ-5 ໂມງແລງ | (206) 386-1931

**Southwest Service Center**
2801 SW Thistle St, Seattle, WA 98126 | ວັນຈັນ-ວັນສຸກ ເວລາ 9 ໂມງເຊົ້າ-5 ໂມງແລງ | (206) 684-7417

**University Service Center**
4534 University Way NE, Seattle, WA 98105 | ວັນອັງຄານ-ວັນເສົາ ເວລາ 9 ໂມງເຊົ້າ-5 ໂມງແລງ | (206) 684-7542